ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ

ເລກທີ 327 /ຖວ
ນະຄອນຫລວງວຽງຈັນ, ວັນທີ 5 / 5 / 2010

# ຂໍ້ຕົກລົງ

## ຂອງລັດຖະມົນຕີວ່າການ ກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ ວ່າດ້ວຍ ການຄຸ້ມຄອງ ການອອກແບບພິມໂຄສະນາ

- ອີງຕາມລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບເລກທີ 32/ສປປ ລົງວັນທີ 6 ພຶດສະພາ 2003;
- ອີງຕາມກົດໝາຍວ່າດ້ວຍ ການພິມຈຳໜ່າຍ ສະບັບເລກທີ 05/ສພຊ ລົງວັນທີ 9 ທັນວາ 2008;
- ອີງຕາມດຳລັດຂອງ ນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ສະບັບເລກທີ 381/ນຍ ລົງວັນທີ 2 ພະຈິກ 2007

## ລັດຖະມົນຕີ ວ່າການ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ
## ອອກຂໍ້ຕົກລົງ
## ວ່າດ້ວຍການຄຸ້ມຄອງ ການອອກແບບພິມໂຄສະນາ

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫລັກການ ແລະ ລະບຽບການ ກ່ຽວກັບການສ້າງຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ, ການຕິດຕາມ ແລະ ກວດກາ ການອອກແບບພິມໂຄສະນາ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ເປັນລະບຽບ, ສວຍງາມ, ໄດ້ມາດຕະຖານ, ເປັນເອກະພາບ ໃນຂອບເຂດທົ່ວປະເທດ, ມີການຂະຫຍາຍຕົວທັນສະໄໝ, ສອດຄ່ອງກັບຮີດຄອງປະເພນີ ແລະ ວັດທະນະທຳ

ອັນດີງາມຂອງລາວ, ຖືກຕ້ອງ ຕາມລະບຽບກົດໝາຍ ແນໃສ່ປະກອບສ່ວນເຂົ້າໃນການປົກປັກ, ສົ່ງເສີມ ແລະ ພັດທະນາ ເສດຖະກິດ, ວັດທະນະທຳ - ສັງຄົມ ໃຫ້ເຂັ້ມແຂງ ແລະ ສີວິໄລ.

**ມາດຕາ 2. ການອອກແບບພິມໂຄສະນາ**

ການອອກແບບພິມໂຄສະນາ ແມ່ນ ການສ້າງຕົ້ນສະບັບຂອງປື້ມ ແລະ ສິ່ງພິມອື່ນ ທີ່ມີເນື້ອຫາສາລະສຳຄັນ, ມີຄຸນນະພາບ, ໄດ້ມາດຕະຖານ ແລະ ມີຄຸນປະໂຫຍດ ເພື່ອໂຄສະນາເຜີຍແຜ່ ແລະ ບໍລິການແກ່ສັງຄົມຢ່າງກວ້າງຂວາງ.

**ມາດຕາ 3. ການອະທິບາຍຄຳສັບ**

ຄຳສັບຕ່າງໆທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ຮ້ານອອກແບບພິມໂຄສະນາ ໝາຍເຖິງ ບ່ອນອອກແບບຕົ້ນສະບັບ, ແຍກສີການພິມ ເພື່ອແຕ້ມ, ພິມໃສ່ເຈ້ຍ, ຜ້າແພ, ຜ້າຢາງ, ແຜ່ນປາລະສະຕິກ ແລະ ອື່ນໆ;
2. ການອອກແບບພິມ ໝາຍເຖິງ ການແຕ້ມ, ຂຽນ, ລະບາຍສີທີ່ສະແດງເຖິງຜະລິດຕະພັນສິນຄ້າທຸກປະເພດ ຫລື ວັດທະນະທຳ-ສັງຄົມ;
3. ສິ່ງພິມ ໝາຍເຖິງ ສິ່ງພິມເອເລັກໂຕຣນິກ, ສື່ສິ່ງພິມ, ປ້າຍໂຄສະນາ, ແຜນພັບ, ໄປສະນີພັນ, ສະແຕມ, ປະຕິທິນ, ບັດອວຍພອນ, ສະຕິກເກີ, ແຜນທີ່, ໂລໂກ, ກາໝາຍ, ບັດເຕີມເງິນ, ໃບບິນ, ເຄື່ອງໝາຍສິນຄ້າ, ປື້ມໂຄສະນາ ແລະ ແບບເນີ ທີ່ປະດັບປະດາດ້ວຍນ້ຳເມິກ ແລະ ສີຕ່າງໆ;
4. ການໂຄສະນາ ໝາຍເຖິງ ການຊວນເຊື່ອ, ຊັກຊວນ, ການແນະນຳທີ່ສະແດງອອກດ້ວຍຮູບພາບ, ຕົວໜັງສືທີ່ມີສີສັນຕ່າງກັນ.

**ມາດຕາ 4. ນະໂຍບາຍຂອງລັດກ່ຽວກັບການອອກແບບພິມໂຄສະນາ**

ລັດ ສົ່ງເສີມ ແລະ ພັດທະນາວຽກງານອອກແບບພິມໂຄສະນາໃຫ້ມີການຂະຫຍາຍຕົວທາງດ້ານປະລິມານ ແລະ ຄຸນນະພາບ, ມີຄວາມກ້າວໜ້າ, ທັນສະໄໝ, ຊຸກຍູ້ທິວຄິດປະດິດສ້າງ, ຜູ້ມີພອນສະຫວັນ ໃນການອອກແບບພິມດ້ວຍນະໂຍບາຍຕ່າງໆເຊັ່ນ: ການສ້າງ ແລະ ປະກອບບຸກຄະລາກອນ, ວັດຖຸເຕັກນິກ, ເຕັກໂນໂລຊີທີ່ທັນສະໄໝ, ການໃຫ້ນາມມະຍົດ ແລະ ຄ່າແຮງງານ ຕາມເງື່ອນໄຂ ແລະ ລະບຽບການ.

ລັດ ສົ່ງເສີມ, ຊຸກຍູ້ໃຫ້ບຸກຄົນ, ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນທາງດ້ານຄວາມຮູ້, ທຶນຮອນເຂົ້າໃນການພັດທະນາ ຫລື ດຳເນີນທຸລະກິດ ກ່ຽວກັບການອອກແບບພິມໂຄສະນາກິດຈະການ ດັ່ງກ່າວ ຕາມລະບຽບກົດໝາຍ.

**ມາດຕາ 5. ຫລັກການ ການອອກແບບພິມໂຄສະນາ**

ການອອກແບບພິມໂຄສະນາ ດຳເນີນ ບົນພື້ນຖານ ຫລັກການຕົ້ນຕໍ ດັ່ງນີ້:

1. ການອອກແບບພິມໂຄສະນາ ຕ້ອງເປັນປະໂຫຍດໃຫ້ແກ່ສັງຄົມ ໃນການຊອກຮູ້ ປື້ມ ຫລື ສິ່ງພິມອື່ນ ທີ່ເຫັນວ່າ ມີ ສາລະຄວາມຮູ້ສຳຄັນຕ່າງໆ;

2. ການອອກແບບພິມໂຄສະນາ ຕ້ອງໃຫ້ຖືກຕ້ອງ ຕາມນະໂຍບາຍ, ລະບຽບກົດໝາຍຂອງລັດ ແລະ ວັດທະນະທຳ ຮີດຄອງອັນດີງາມຂອງຊາດ ທັງສອດຄ່ອງກັບສະພາບຄວາມເປັນຈິງ ທາງດ້ານເສດຖະກິດ-ສັງຄົມ;

3. ການອອກແບບພິມໂຄສະນາ ຕ້ອງໄດ້ຮັບການຄຸ້ມຄອງ, ກວດກາ ແລະ ຢັ້ງຢືນຢ່າງຖືກຕ້ອງ ຈາກອົງການທີ່ກ່ຽວຂ້ອງ.

**ມາດຕາ 6. ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ, ຮ່ວມມືດ້ານການອອກແບບພິມໂຄສະນາກັບຕ່າງປະເທດ, ພາກພື້ນ ແລະ ສາກົນດ້ວຍການຊຸກຍູ້ການເຄື່ອນໄຫວດຳເນີນທຸລະກິດ, ການແລກປ່ຽນບົດຮຽນ, ການຍາດແຍ່ງທຶນຮອນ, ເຕັກໂນໂລຊີ ບົນພື້ນຖານເຄົາລົບເອກະລາດ, ອະທິປະໄຕ, ສະເໝີພາບ, ແລະ ຕ່າງຝ່າຍຕ່າງມີຜົນປະໂຫຍດໂດຍສອດຄ່ອງກັບສັນຍາ ແລະ ສົນທິສັນຍາສາກົນທີ່ ສປປ ລາວເປັນພາຄີ.

## ໝວດທີ 2
## ປະເພດ ແລະ ເນື້ອໃນ ການອອກແບບພິມໂຄສະນາ

**ມາດຕາ 7. ປະເພດການອອກແບບພິມໂຄສະນາ**

ການອອກແບບພິມໂຄສະນາ ປະກອບດ້ວຍສິ່ງພິມປະເພດຕ່າງໆດັ່ງນີ້: ປື້ມ, ແຜ່ນພັບ, ສະຕິກເກີ, ແບນເນີ, ໂປສເຕີ, ສະຫລາກສິນຄ້າ, ເຄື່ອງໝາຍການຄ້າ, ແຜນທີ່, ປະຕິທິນ, ໄປສະນີພັນ, ກາກໂປສຕານ, ບັດອວຍພອນ, ໂລໂກ, ກາໝາຍ, ສະແຕມ, ບັດຕື່ມເງິນ, ໃບບິນ ແລະ ປື້ມໂຄສະນາອື່ນໆ.

**ມາດຕາ 8. ເນື້ອໃນ ການອອກແບບພິມໂຄສະນາ**

ການອອກແບບພິມໂຄສະນາ ມີ ເນື້ອໃນ ຕົ້ນຕໍ ດັ່ງນີ້:

1. ການແຕ້ມ, ຂຽນ ກ່ຽວກັບສິນຄ້າປະເພດຕ່າງໆ ຕ້ອງເອົາຕົວອັກສອນ (ໜັງສື) ລາວເປັນຫລັກ, ໃຫ້ຖືກຕ້ອງຕາມຫລັກໄວຍະກອນລາວ ທີ່ກະຊວງສຶກສາທິການປະກາດໃຊ້ໃນປັດຈຸບັນ, ຕົວອັກສອນລາວຕ້ອງໃຫຍ່ກວ່າ ແລະ ຢູ່ເທິງຕົວອັກສອນສາກົນ ຫລື ພາສາລາວຕ້ອງໄວ້ເບື້ອງຊ້າຍມື ແລະ ພາສາຕ່າງປະເທດ ໄວ້ເບື້ອງຂວາມື.

ເນື້ອໃນຜະລິດຕະພັນ ກໍຕ້ອງຂຽນພາສາລາວຢູ່ເທິງ ແລະ ໃຫຍ່ກວ່າພາສາຕ່າງປະເທດ. ໃນກໍລະນີກົງກັນຂ້າມ ຖ້າຫາກມີຄວາມຈຳເປັນ ກໍຕ້ອງນຳມາແຈ້ງຕໍ່ອົງການຄຸ້ມຄອງ ການອອກແບບພິມໂຄສະນາ ເພື່ອຄົ້ນຄວ້າພິຈາລະນາ;

2. ການແຕ້ມ, ຂຽນ ຕ້ອງໃຫ້ສວຍງາມ, ພໍດີພໍງາມ, ສົມສ່ວນກັບຂະໜາດ, ຮູບແບບຂອງສິນຄ້າ ແລະ ໃຫ້ເຂົ້າໃຈງ່າຍ.

## ໝວດທີ 3
## ການອະນຸຍາດ ສ້າງຕັ້ງ ຮ້ານອອກແບບພິມໂຄສະນາ

**ມາດຕາ 9. ການຂໍອະນຸຍາດສ້າງຕັ້ງ**

ບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງສ້າງຕັ້ງຮ້ານອອກແບບພິມໂຄສະນາ ຕ້ອງໄດ້ຍື່ນຄໍາຮ້ອງພ້ອມດ້ວຍເອກະສານຕ່າງໆ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 10 ລຸ່ມນີ້ ຕໍ່ກົມພິມຈໍາໜ່າຍ ຫລື ພະແນກຖະແຫລງຂ່າວ ແລະ ວັດທະນະທໍາ ແຂວງ, ນະຄອນ ຫລື ຫ້ອງການຖະແຫລງຂ່າວ ແລະ ວັດທະນະທໍາ ເມືອງ, ເທດສະບານ ບ່ອນທີ່ຕົນອາໄສຢູ່.

**ມາດຕາ 10. ເອກະສານປະກອບຄໍາຮ້ອງຂໍອະນຸຍາດສ້າງຕັ້ງ**

ເອກະສານປະກອບຄໍາຮ້ອງຂໍອະນຸຍາດ ສ້າງຕັ້ງຮ້ານອອກແບບພິມໂຄສະນາ ມີ ດັ່ງນີ້:

- ໃບຄໍາຮ້ອງ ຕາມແບບຮ່າງຂອງອົງການຄຸ້ມຄອງການພິມຈໍາໜ່າຍ 1 ສະບັບ;
- ບົດວິພາກເສດຖະກິດ-ເຕັກນິກ 1 ສະບັບ;
- ຊີວະປະຫວັດ 1 ສະບັບ;
- ໃບປະກາສະນີຍະບັດ 1 ສະບັບ;
- ໃບຢັ້ງຢືນທີ່ຢູ່ 1 ສະບັບ;
- ໃບຢັ້ງຢືນການນໍາໃຊ້ອາຄານ, ທີ່ດິນ (ຖ້າມີ) 1 ສະບັບ;
- ໃບແຈ້ງໂທດເລກທີ 3 ຂອງສານປະຊາຊົນ 1 ສະບັບ;
- ບັດປະຈໍາຕົວ, ປຶ້ມສໍາມະໂນຄົວ 1 ສະບັບ;
- ຮູບ 3 x 4 ຊມ 02 ແຜ່ນ.

**ມາດຕາ 11. ການພິຈາລະນາ ອອກໃບອະນຸຍາດ ສ້າງຕັ້ງ**

ອົງການຄຸ້ມຄອງການພິມຈໍາໜ່າຍ ທີ່ກ່ຽວຂ້ອງ ຕ້ອງພິຈາລະນາພາຍໃນກໍານົດເວລາສິບຫ້າວັນລັດຖະການ ນັບແຕ່ວັນໄດ້ຮັບຄໍາຮ້ອງດັ່ງກ່າວ ເປັນຕົ້ນໄປ. ໃນກໍລະນີທີ່ບໍ່ສາມາດອະນຸຍາດໄດ້ ກໍຕ້ອງແຈ້ງຄືນໃຫ້ຜູ້ຮ້ອງຂໍນັ້ນຊາບ ຢ່າງເປັນລາຍລັກອັກສອນ.

## ໝວດທີ 4
## ສິດ ແລະ ໜ້າທີ່ຂອງຮ້ານອອກແບບພິມໂຄສະນາ

**ມາດຕາ 12. ສິດຂອງຮ້ານອອກແບບພິມໂຄສະນາ**

ຮ້ານອອກແບບພິມໂຄສະນາ ມີ ສິດ ຕົ້ນຕໍ ດັ່ງນີ້:

1. ເຄື່ອນໄຫວອອກແບບພິມໂຄສະນາ ຢ່າງເປັນທາງການ ພາຍຫລັງໄດ້ຮັບໃບອະນຸຍາດ ສ້າງຕັ້ງແລ້ວ;

2. ຄຸ້ມຄອງບໍລິຫານ ແລະ ຕັດສິນທຸກບັນຫາພາຍໃນຮ້ານຂອງຕົນ;
3. ຮ່ວມມືກັບບໍລິສັດ ທັງພາຍໃນ ແລະ ຕ່າງປະເທດ ຕາມລະບຽບກົດໝາຍ;
4. ສົ່ງເສີມ ແລະ ກໍ່ສ້າງບຸກຄະລາກອນພາຍໃນຮ້ານຂອງຕົນ ໃຫ້ມີຄວາມຮູ້ ຄວາມສາມາດ;
5. ປ່ຽນຊື່, ສະຖານທີ່, ຈຸດປະສົງ ແລະ ເປົ້າໝາຍອື່ນ ແຕ່ຕ້ອງໄດ້ຂໍອະນຸຍາດ ຈາກອົງການຄຸ້ມຄອງການພິມຈຳໜ່າຍ ເສຍກ່ອນ.

**ມາດຕາ 13. ໜ້າທີ່ຂອງຮ້ານອອກແບບພິມໂຄສະນາ**

ຮ້ານອອກແບບພິມໂຄສະນາ ມີ ໜ້າທີ່ ຕົ້ນຕໍ ດັ່ງນີ້:

1. ຂຶ້ນປ້າຍຮ້ານຢ່າງຈະແຈ້ງ ແລະ ຢ່າງຖືກຕ້ອງ;
2. ເສຍອາກອນປະຈຳປີ ຕາມລະບຽບກົດໝາຍ;
3. ໃຊ້ຕາປະທັບຮ້ານ ທີ່ເປັນຂອງຕົນເອງ;
4. ຮັບຜິດຊອບຊີວິດການເປັນຢູ່, ເງິນເດືອນ, ເງິນອູນໜູນ ແລະ ນະໂຍບາຍຕ່າງໆ ຂອງພະນັກງານ ແລະ ກຳມະກອນ ພາຍໃນຮ້ານຂອງຕົນ ຕາມລະບຽບກົດໝາຍ;
5. ສະຫລຸບ, ລາຍງານ ຜົນຂອງການອອກແບບພິມໂຄສະນາຂອງຕົນ ໃຫ້ອົງການຄຸ້ມຄອງການພິມຈຳໜ່າຍ ທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 14. ຂໍ້ຫ້າມສຳລັບຮ້ານອອກແບບພິມໂຄສະນາ**

ຫ້າມ ຮ້ານອອກແບບພິມໂຄສະນາ ມີ ການກະທຳ ດັ່ງນີ້:

1. ອອກແບບພິມ ບໍ່ຖືກຕ້ອງຕາມສັນຍາ ແລະ ລະບຽບກົດໝາຍ;
2. ນຳເອົາສິ່ງພິມປະເພດຕ່າງໆ ທີ່ໄດ້ກຳນົດໄວ້ໃນ ມາດຕາ 7 ຂອງຂໍ້ຕົກລົງ ສະບັບນີ້ ມາອອກແບບພິມ ໂຄສະນາໂດຍບໍ່ໄດ້ຮັບອະນຸຍາດ ຈາກອົງການຄຸ້ມຄອງການພິມຈຳໜ່າຍ;
3. ນຳເຂົ້າການອອກແບບພິມໂຄສະນາ ທີ່ເຮັດສຳເລັດຮູບ ຈາກຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດ;
4. ນຳໃຊ້ ພາຫະນະ, ວັດຖຸ ອຸປະກອນ, ເຄື່ອງອອກແບບພິມ ທີ່ບໍ່ໄດ້ມາດຕະຖານ;
5. ອອກແບບພິມໂຄສະນາເກີນຄວາມເປັນຈິງ, ບໍ່ສອດຄ່ອງ ແລະ ແຕະຕ້ອງເຖິງກຽດສັກສີຂອງຊາດ, ຂອງຜູ້ນຳ, ບັນພະບູລຸດ, ຄວາມສາມັກຄີຂອງປະຊາຊົນບັນດາເຜົ່າ ແລະ ຂັດກັບຮີດຄອງປະເພນີ ອັນດີງາມຂອງຊາດ;
6. ມີການກະທຳອື່ນ ທີ່ເປັນການລະເມີດ ກ່ຽວກັບການອອກແບບພິມໂຄສະນາ.

**ມາດຕາ 15. ຂໍ້ຫ້າມ ສຳລັບບຸກຄົນ ແລະ ການຈັດຕັ້ງອື່ນ**

ຫ້າມບຸກຄົນ ແລະ ການຈັດຕັ້ງອື່ນ ມີ ການກະທຳ ດັ່ງນີ້:

1. ກົດໜ່ວງ ຖ່ວງດຶງ ຫລື ທຳລາຍເອກະສານ ຂໍອະນຸຍາດສ້າງຕັ້ງຮ້ານອອກແບບພິມໂຄສະນາ;
2. ຂັດຂວາງ ແລະ ແຊກແຊງການເຄື່ອນໄຫວທີ່ຖືກຕ້ອງ ຂອງຮ້ານອອກແບບພິມໂຄສະນາ;
3. ຂັດຂວາງການອອກແບບພິມໂຄສະນາສິ່ງພິມ ທຸກປະເພດ;
4. ແນະນຳ ແລະ ຍຸຍົງ ສົ່ງເສີມ ການອອກແບບພິມໂຄສະນາ ທີ່ເປັນການສ້າງຄວາມເສື່ອມເສຍ ໃຫ້ແກ່ສັງຄົມ;
5. ມີການກະທຳອື່ນ ທີ່ເປັນການລະເມີດ ກ່ຽວກັບການອອກແບບພິມໂຄສະນາ.

## ໝວດທີ 6

## ການຄຸ້ມຄອງ ແລະ ການກວດກາຮ້ານອອກແບບພິມໂຄສະນາ

**ມາດຕາ 16. ອົງການຄຸ້ມຄອງ ແລະ ກວດກາຮ້ານອອກແບບພິມໂຄສະນາ**

ລັດຖະບານ ຄຸ້ມຄອງວຽກງານອອກແບບພິມໂຄສະນາຢ່າງລວມສູນ ແລະ ເປັນເອກະພາບໃນທົ່ວປະເທດໂດຍມອບໃຫ້ກະຊວງຖະແຫລງຂ່າວ ແລະ ວັດທະນະທຳເປັນໃຈກາງປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດຕົວຈິງ.

ອົງການຄຸ້ມຄອງ ແລະ ກວດກາຮ້ານອອກແບບພິມໂຄສະນາ ແມ່ນ ອົງການດຽວກັນກັບອົງການຄຸ້ມຄອງ ແລະ ກວດກາການພິມຈຳໜ່າຍ ຊຶ່ງປະກອບດ້ວຍ:

- ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ໂດຍແມ່ນກົມພິມຈຳໜ່າຍ ເປັນເສນາທິການ;
- ພະແນກຖະແຫລງຂ່າວ ແລະ ວັດທະນະທຳ ແຂວງ, ນະຄອນ;
- ຫ້ອງການຖະແຫລງຂ່າວ ແລະ ວັດທະນະທຳ ເມືອງ, ເທດສະບານ.

**ມາດຕາ 17. ສິດ ແລະ ໜ້າທີ່ຂອງກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ**

ໃນການຄຸ້ມຄອງ ແລະ ກວດກາຮ້ານອອກແບບພິມໂຄສະນາ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ຮ່າງນະໂຍບາຍ, ແຜນຍຸດທະສາດ, ແຜນງານ, ແຜນການພັດທະນາ, ນິຕິກຳ ກ່ຽວກັບການອອກແບບພິມໂຄສະນາ ເພື່ອຊີ້ນຳການຈັດຕັ້ງປະຕິບັດ;
2. ຊຸກຍູ້, ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງພະແນກຖະແຫລງຂ່າວ ແລະ ວັດທະນະທຳ ແຂວງ, ນະຄອນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້;

3. ອອກ, ຖອນ ແລະ ລົບລ້າງ ໃບອະນຸຍາດສ້າງຕັ້ງຮ້ານອອກແບບພິມໂຄສະນາ, ເກັບກູ້, ທຳລາຍຖິ້ມສິ່ງພິມໂຄສະນາທີ່ບໍ່ຖືກຕ້ອງ ຕາມຄວາມຮັບຜິດຊອບຂອງຕົນ;
4. ແກ້ໄຂຄຳສະເໜີ ແລະ ສະກັດກັ້ນການເຄື່ອນໄຫວຂອງຮ້ານອອກແບບພິມໂຄສະນາທີ່ຂັດກັບລະບຽບກົດໝາຍຕາມພາລະບົດບາດຂອງຕົນ;
5. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງໃນການຄຸ້ມຄອງ, ກວດກາ ແລະ ຈັດຕັ້ງປະຕິບັດການອອກແບບພິມໂຄສະນາ;
6. ພົວພັນ ແລະ ຮ່ວມມື ກັບ ຕ່າງປະເທດ ກ່ຽວກັບວຽກງານອອກແບບພິມໂຄສະນາ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 18. ສິດ ແລະ ໜ້າທີ່ຂອງພະແນກຖະແຫລງຂ່າວ ແລະ ວັດທະນະທຳ ແຂວງ, ນະຄອນ**

ໃນການຄຸ້ມຄອງ ແລະ ກວດກາຮ້ານອອກແບບພິມໂຄສະນາ ພະແນກຖະແຫລງຂ່າວ ແລະ ວັດທະນະທຳ ແຂວງ, ນະຄອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍລະບຽບກົດໝາຍ, ແຜນການ, ໂຄງການຂອງກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ ກ່ຽວກັບການອອກແບບພິມ ມາເປັນລະບຽບການ, ແຜນການ, ໂຄງການຂອງຕົນ ແລະ ຈັດຕັ້ງປະຕິບັດ;
2. ສຳຫລວດ ແລະ ເກັບກຳຂໍ້ມູນກ່ຽວກັບຮ້ານອອກແບບພິມໂຄສະນາ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
3. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ ຂໍ້ຕົກລົງ ສະບັບນີ້ ຢ່າງທົ່ວເຖິງ;
4. ອອກ, ຖອນ ແລະ ລົບລ້າງໃບອະນຸຍາດສ້າງຕັ້ງຮ້ານອອກແບບພິມໂຄສະນາປະເພດຕ່າງໆ, ເກັບກູ້, ທຳລາຍຖິ້ມ ສິ່ງພິມໂຄສະນາທີ່ບໍ່ຖືກຕ້ອງຊຶ່ງຢູ່ໃນຄວາມຮັບຜິດຊອບຂອງຕົນ;
5. ຊີ້ນຳ, ຊຸກຍູ້ຫ້ອງການຖະແຫລງຂ່າວ ແລະ ວັດທະນະທຳ ເມືອງ, ເທດສະບານ ໃນການຈັດຕັ້ງປະຕິບັດວຽກງານອອກແບບພິມໂຄສະນາ;
6. ແກ້ໄຂຄຳສະເໜີ ແລະ ສະກັດກັ້ນການເຄື່ອນໄຫວຂອງຮ້ານອອກແບບພິມໂຄສະນາທີ່ຂັດກັບລະບຽບກົດໝາຍຕາມພາລະບົດບາດຂອງຕົນ;
7. ສະຫລຸບ, ລາຍງານ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ວຽກງານອອກແບບພິມໂຄສະນາ ຕໍ່ຂັ້ນເທິງຖັດຕົນ ຢ່າງເປັນປົກກະຕິ;
8. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ຫລື ຕາມການມອບໝາຍຂອງກະຊວງຖະແຫລງຂ່າວ ແລະ ວັດທະນະທຳ.

**ມາດຕາ 19. ສິດ ແລະ ໜ້າທີ່ຂອງຫ້ອງການຖະແຫລງຂ່າວ ແລະ ວັດທະນະທຳ ເມືອງ, ເທດສະບານ**

ໃນການຄຸ້ມຄອງ ແລະ ກວດກາຮ້ານອອກແບບພິມໂຄສະນາ ຫ້ອງການຖະແຫລງຂ່າວ ແລະ ວັດທະນະທຳ ເມືອງ, ເທດສະບານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1 ຈັດຕັ້ງປະຕິບັດລະບຽບກົດໝາຍ, ແຜນການ, ໂຄງການກ່ຽວກັບການອອກແບບພິມໂຄສະນາ;

2. ສໍາຫລວດ ແລະ ເກັບກໍາຂໍ້ມູນກ່ຽວກັບຮ້ານອອກແບບພິມໂຄສະນາໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

3. ອອກ, ຖອນ ແລະ ລົບລ້າງໃບອະນຸຍາດສ້າງຕັ້ງຮ້ານອອກແບບພິມໂຄສະນາປະເພດຕ່າງໆ, ເກັບກູ້, ທໍາລາຍຖິ້ມ ສິ່ງພິມໂຄສະນາທີ່ບໍ່ຖືກຕ້ອງຊຶ່ງຢູ່ໃນຄວາມຮັບຜິດຊອບຂອງຕົນ;

4. ເຜີຍແຜ່, ສຶກສາອົບຮົມ ຂໍ້ຕົກລົງ ສະບັບນີ້ ຢ່າງກວ້າງຂວາງ;

5. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດວຽກງານອອກແບບພິມໂຄສະນາ;

6. ສະຫລຸບ, ລາຍງານ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານອອກແບບພິມໂຄສະນາຕໍ່ຂັ້ນເທິງຖັດຕົນ ຢ່າງເປັນປົກກະຕິ

7. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

## ໝວດທີ 7
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 20. ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ ຫລື ການຈັດຕັ້ງທີ່ມີຜົນງານດີເດັ່ນ ໃນການປະຕິບັດຂໍ້ຕົກລົງສະບັບນີ້ ຫລື ໄດ້ປະກອບສ່ວນເຂົ້າໃນການຄຸ້ມຄອງ ແລະ ກວດກາ ວຽກງານອອກແບບພິມໂຄສະນາ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບກົດໝາຍ.

### ມາດຕາ 21. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ຫລື ການຈັດຕັ້ງທີ່ໄດ້ຮັບໃບອະນຸຍາດສ້າງຕັ້ງຮ້ານອອກແບບພິມໂຄສະນາ ເມື່ອໝົດກໍານົດເວລາແລ້ວ ໃຫ້ສະເໜີຕໍ່ໃບອະນຸຍາດນໍາພາກສ່ວນທີ່ກ່ຽວຂ້ອງ ບໍ່ດັ່ງນັ້ນ ຈະຖືວ່າເປັນການລະເມີດຂໍ້ຕົກລົງສະບັບນີ້ ໂດຍຈະຖືກຕັກເຕືອນ, ປັບໃໝ, ຢຸດເຊົາ ຫລື ດໍາເນີນຄະດີຕາມລະບຽບກົດໝາຍ ຕາມແຕ່ລະກໍລະນີ ດັ່ງນີ້:

- ຖ້າກາຍກໍານົດ ສາມເດືອນ ຫາຫົກເດືອນ ຈະຖືກກ່າວເຕືອນ, ເຮັດບົດບັນທຶກ ແລະ ປັບໃໝ 20% ຂອງຄ່າທໍານຽມສ້າງຕັ້ງຮ້ານອອກແບບພິມ;.
- ຖ້າກາຍກໍານົດເກີນກວ່າ ຫົກເດືອນ ຫາສິບແປດເດືອນ ຈະຖືກກ່າວເຕືອນ, ເຮັດບົດບັນທຶກ ແລະ ປັບໃໝ 50% ຂອງຄ່າທໍານຽມສ້າງຕັ້ງຮ້ານອອກແບບພິມ;
- ຖ້າກາຍກໍານົດເກີນກວ່າ ສິບແປດເດືອນ ຈະຖືກປັບໃໝ 100% ຂອງຄ່າທໍານຽມສ້າງຕັ້ງຮ້ານອອກແບບພິມ ພ້ອມທັງຢຸດເຊົາການດໍາເນີນກິດຈະການອອກແບບພິມ;
- ຖ້າບຸກຄົນໃດ ຫາກກໍ່ຄວາມເສຍຫາຍ ໃຫ້ແກ່ບຸກຄົນອື່ນ ຫລື ການຈັດຕັ້ງ ໂດຍມີອົງປະກອບຂອງການກະທໍາຜິດທາງອາຍາ ຈະຖືກດໍາເນີນຄະດີ ຕາມລະບຽບກົດໝາຍ.

ນອກຈາກນີ້ ຜູ້ນໍາເຂົ້າສິ່ງອອກແບບພິມໂຄສະນາປະເພດຕ່າງໆທີ່ໃຊ້ໜັງສືສາກົນ ແລະ ຮູບພາບຂອງຕ່າງປະເທດ ແລະ ຂອງລາວ ກ່ອນໄດ້ຮັບອະນຸຍາດນັ້ນແລ້ວ ສິ່ງອອກແບບພິມດັ່ງກ່າວ ຈະຖືກຍຶດ ແລະ ຈະຖືກປັບໃໝຕາມລະບຽບກົດໝາຍ.

# ໝວດທີ 8
# ບົດບັນຍັດສຸດທ້າຍ

**ມາດຕາ 22. ການຈັດຕັ້ງປະຕິບັດ**

ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ, ກົມພິມຈຳໜ່າຍ, ພະແນກຖະແຫລງຂ່າວ ແລະ ວັດທະນະທຳ ແຂວງ, ນະຄອນ, ຫ້ອງການຖະແຫລງຂ່າວ ແລະ ວັດທະນະທຳ ເມືອງ, ເທດສະບານ ເປັນຜູ້ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 23. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຄຳສັ່ງ, ຄຳແນະນຳ, ແຈ້ງການ ແລະ ລະບຽບການໃດ ທີ່ຂັດກັບ ຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ລັດຖະມົນຕີ ວ່າການ
ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ

ໝູນແກ້ວ ອໍລະບູນ